**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

===000===

ກະຊວງສາທາລະນະສຸກ

ກົມອາຫານ ແລະ ຢາ | ເລກທີ 511/ກອຢ

ໂທລະສັບ: 214014 | ນະຄອນຫຼວງວຽງຈັນ, ວັນທີ 26 ມັງກອນ 2012

# ແຈ້ງການ

ຮຽນ: ທ່ານ ຫົວຫນ້າພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ໃນທົ່ວປະເທດ.

ເລື່ອງ: ການຕິດຕາມກວດກາຢາປົວພະຍາດ ທີ່ບໍ່ຮັບປະກັນຄຸນນະພາບ (Diclofenac 75mg Injection) ຈໍລະຈອນຈໍາຫນ່າຍ ຢູ່ໃນ ສ ປປ ລາວ.

- ອີງຕາມ ການລາຍງານຈາກທ້ອງຖິ່ນ ກ່ຽວກັບການກວດພົບຢາທີ່ບໍ່ຮັບປະກັນຄຸນນະພາບ.

ເພື່ອຈັດຕັ້ງປະຕິບັດວຽກງານການຕິດຕາມຄຸນນະພາບຢາທີ່ຈໍລະຈອນ ຢູ່ ສປປ ລາວ ແລະ ປະຕິບັດມາດຕະ ການປ່າງທັນການ. ໃນປະຈຸບັນໄດ້ມີສະພາບບັນຫາຢາທີ່ບໍ່ຮັບປະກັນຄຸນນະພາບ ຈໍລະຈອນຈໍາໜ່າຍ ຢູ່ ສປປລາວ. ກົມອາຫານ ແລະ ຢາ ຈຶ່ງແຈ້ງມາຍັງທ່ານ ດັ່ງລາຍລະອຽດຄື:

1. ສະເຫນີຄະນະພະແນກສາທາລະນະສຸກແຂວງ ແລະ ນະຄອນຫຼວງ ໃນທົ່ວປະເທດ ຊີ້ນໍາຂະແຫນງ ອາຫານ ແລະ ຢາ ແຂວງຂອງຕົນ ເພື່ອລົງຕິດຕາມກວດກາຢາ ທີ່ມີບັນຫາດ້ານຄຸນນະພາບ ຈໍລະຈອນໃນຕະຫນ່າງ ສາທາລະ ນະສຸກ ນັບທັງພາກລັດ ແລະ ເອກະຊົນ (ໂຮງໝໍແຂວງ, ເມືອງ, ສຸກສາລາ ແລະ ຮ້ານຂາຍຢາ).

2. ໃນການລົງຕິດຕາມກວດກາແມ່ນໃຫ້ເນັ້ນໃສ່ຢາ Diclofenac ຊະນິດສັກ, ຄວາມແຮງ 75mg ຂະໜາດບັນຈຸແມ່ນ 3ml ຂອງບໍລິສັດ March ທີ່ໄດ້ຕິດສະຫລາກສີເຫລືອງໃສ່ຫລອດຢາ ແລະ ກໍານົດວັນໝົດ ອາຍຸໃນປີ 2013. ແຕ່ຖ້າສັງເກດໃຫ້ດີແລ້ວ ຈະເຫັນວ່າມີການຕິດສະຫລາກທັບໃສ່ ສະຫລາກທີ່ແທ້ຈິງຂອງ ຫລອດຢາດັ່ງກ່າວ ເຊິ່ງມີຕົວໜັງສືສີຟ້າພິມລົງຫລອດຢາ ແລະ ມີວັນໝົດທີແທ້ຈິງແມ່ນປີ 2009.

3. ຖ້າພົບເຫັນຢາດັ່ງກ່າວໃຫ້ຢຶດ ແລະ ເກັບຮັກສາໄວ້ນໍາຂະແຫນງອາຫານ ແລະ ຢາແຂວງ ແລະ ພ້ອມທັງ ເກັບກໍາຂໍ້ມູນໃນການສະຫນອງ ຫຼື ແຫຼ່ງທີ່ມາໃຫ້ລະອຽດ ແລ້ວລາຍງານໃຫ້ກົມອາຫານ ແລະ ຢາ ຊາບໂດຍ ດ່ວນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຂໍຄວາມຮ່ວມມືຕາມທາງຄວນດ້ວຍ

ຮຽນມາດ້ວຍຄວາມນັບຖື

**ຫົວຫນ້າກົມອາຫານ ແລະ ຢາ**

ສົມທະວີ ຈາງວິສົມມິດ


3 ml
FENAC INJECTI
ml. contains :-
Sodium 75 mg
o. 1 A 822/41
No.ID02J02
03 Oct. 2005
02 Oct. 2009
3 ml.
AC INJECTI
ontains :
Sodium 75 m
822/41
No. ID02N01
03 Sep. 2009
02 Sep. 2013

DICLOFE
Each 3
Diclofe
FENAC INJ
3 ml contain
nac Sodium
1A 822/41
3 ml.
INJECTIO
tains :
dium 75 m
CTION
5 mg